## ສະບາຍດີ...

- ທາງສູນບໍລິການສຸຂພາບແມ່ຍິງຂອງເມືອງ Liverpool ຂໍຕ້ອນຮັບດ້ວຍຄວາມຍິນດີ, ນີ້ແມ່ນບ່ອນບໍລິການຢູ່ຕາມຊຸມຊົນ ທີ່ດຳເນີນດ້ວຍແມ່ຍິງໃຫ້ສຳລັບແມ່ຍິງ.

- ຍິນດີຕ້ອນຮັບແມ່ຍິງທຸກໆຂັ້ນອາຍຸແລະວັທະນະທຳ - ແມ່ຍິງທີ່ຍັງໜຸ່ມ, ແມ່ຍິງທີ່ເຖົ້າແກ່ແລ້ວ, ແມ່ຍິງໂສດທີ່ມີລູກ, ແມ່ຍິງທີ່ມາຕັ້ງຖິ່ນຖານໃໝ່, ແມ່ຍິງພື້ນເມືອງອາບໍຣິຈິໂນລ໌, ແມ່ຍິງກະເທີຍ, ແມ່ຍິງບໍ່ສົມບູນຕ່າງໆ.

- ພວກເຮົາເຊື່ອວ່າ ແມ່ຍິງທຸກຄົນມີສິດຕັດສິນໃຈໃນເຣື່ອງທີ່ເຂົ້າໃຈລາຍລະອຽດດີ ດ້ວຍຕົນເອງໄດ້ ກ່ຽວກັບສຸຂພາບແລະຊີວິດຂອງພວກເຂົາ.

- ມີກຸ່ມແມ່ຍິງທີ່ໄດ້ຜ່ານການຝຶກຫັດມາ ແລະມີຄວາມຊຳນິຊຳນານຫຼາຍຢ່າງ ຮັບຜິດຊອບຄວາມຕ້ອງການໃນການຮັກສາສຸຂພາບຂອງທ່ານ.

- ພະນັກງານຂອງພວກເຮົາມີເບື້ອງຫຼັງມາຈາກວັທະນະທຳຕ່າງໆ. ບາງຄົນກໍ່ປາກສອງພາສາໄດ້ ແລະອາດສາມາດຊ່ວຍໄດ້ຖ້າທ່ານມີຄວາມລຳບາກກັບພາສາອັງກິດ.

- ຖ້າວ່າບໍ່ມີສະມາຊິກຂອງພະນັກງານຮັບໃຊ້ ປາກພາສາຂອງທ່ານ ກໍ່ຈະໄດ້ຈັດຫາການຊ່ວຍເຫຼືອຂອງນາຍພາສາ.

- *ຕັ້ງແຕ່ເປີດມາໃນປີ 1975, ສູນບໍຣິການສຸຂພາບແມ່ຍິງຂອງເມືອງ Liverpool ໄດ້ຊ່ວຍແມ່ຍິງຫຼາຍພັນຄົນ ເຮັດໃຫ້ສຸຂພາບແລະການຢູ່ສະບາຍຂອງພວກເຂົາດີຂຶ້ນ.*

ພວກເຮົາຫວັງວ່າຈະສາມາດຊ່ວຍທ່ານໄດ້ເໝືອນກັນ.

## ຈະຊອກພວກເຮົາຢູ່ບ່ອນໃດ...




ໂທລະສັບເຮັດການນັດໝາຍ

(02) 9601 3555

ຊົ່ວໂມງ: 9 ໂມງເຊົ້າ ຫາ 5 ໂມງແລງ ວັນຈັນ - ວັນສຸກ
ຊົ່ວໂມງນອກເວລາແມ່ນໄດ້ນັດເອົາ


This service is funded by the NSW Health Department
through the South Western Sydney Area Health Service


# ສູນບໍລິການສຸຂພາບແມ່ຍິງຂອງເມືອງ Liverpool

# LIVERPOOL WOMEN'S HEALTH CENTRE

Women's Health - Women's Lives

*in women's hands*


**26 Bathurst Street**
**Liverpool NSW 2170**
Corner of Campbell and Bathurst Streets

**ໂທລະສັບ:** (02) 9601 3555

**ສານ ແຟກສ໌:** (02) 9824 0448


**LAO**

# ບໍລິການຕ່າງໆທີ່ພວກເຮົາຮັບໃຊ້...

- ◆ ໃຫ້ການປຶກສາສ່ວນຕົວບຸກຄົນເລື່ອງທາງການແພດ ແລະວິທີທາງການແພດໃນຂອບເຂດເລື່ອງການຄຸມກຳເນີດ, ຄຳແນະນຳໃນການຖືພາ, ການກວດ Pap (ແພປ໌) ເບິ່ງມະເລັງມົດລູກ, ການກວດເບິ່ງມະເລັງເຕົ້ານົມ, ຄວາມເຄັ່ງຕຶງຕ່ອນເວລາກ່ອນເປັນລະດູ, ການໝົດລະດູການຂອງແມ່ຍິງ, ພະຍາດຊ່ອງຄອດ, ເຊື້ອໂລກທາງເພດ STDs & ໂລກແອດສ໌ HIV/AIDS.
- ◆ ໃຫ້ການປຶກສາການໃຊ້ຢາທຳມະຊາດພື້ນເມືອງ/ໃຊ້ຢາໜ້ອຍລົງ ໃນທຸກຂອບເຂດຂອງເລື່ອງສຸຂພາບແມ່ຍິງ.
- ◆ ບໍລິການບີບນວດເສັ້ນປະສາດສັນຫຼັງ.
- ◆ ການປິ່ນປົວດ້ວຍການບີບນວດ
- ◆ ໃຫ້ການປຶກສາສ່ວນຕົວບຸກຄົນ - ບັນຫາຈິດໃຈ, ຄວາມສຳພັນ, ລ່ວງເກີນທາງເພດ, ຄວາມຮຸນແຮງ, ອື່ນໆ.
- ◆ ການຊິດຊ່ວຍເລື່ອງຂື້ນສານສຳລັບແມ່ຍິງທີ່ກຳລັງໄດ້ຮັບຄວາມລຳບາກເລື່ອງຄວາມຮຸນແຮງພາຍໃນຄອບຄົວ.
- ◆ ການຊິດຊ່ວຍຕ່າງໆສຳລັບແມ່ຍິງທີ່ມາຕັ້ງຖິ່ນຖານໃໝ່ ແລະແມ່ຍິງພື້ນເມືອງ ອາບໍຣິຈິໄນລ໌.
- ◆ ມີໝວດສິດສອນແລະຊິດຊ່ວຍສຳລັບບັນຫາສຸຂພາບຕ່າງໆຂອງແມ່ຍິງ ຮ່ວມທັງຄວາມຮຸນແຮງພາຍໃນຄອບຄົວ, ຈິດໃຈເມື່ອຍ, ກັງວົນ, ເຊື່ອມັ່ນໃນຕົວເອງ, ໝົດລະດູ, ສຸຂພາບແມ່ຍິງເຖົ້າແກ່, ເສົ້າໂສກສູນເສັຽ, ອື່ນໆ.
- ◆ ການສອນສະມາທິ Yoga ແລະການຜ່ອນໃຈມີປະຈຳ.
- ◆ ລາຍລະອຽດ, ຄຳແນະນຳແລະການສົ່ງໄປຂໍຄວາມເຫັນກ່ຽວກັບເລື່ອງທີ່ແມ່ຍິງເປັນຫ່ວງ.

# ເລື່ອງຄ່າຈ້າງ...

- ◆ ການປຶກສາເລື່ອງສຸຂພາບແລະການກວດເບິ່ງເຊື້ອໂລກແມ່ນຄິດຄ່ານຳຫ້ອງການສຸຂພາບລັດ[illegible].
- ◆ ມີການຄິດຄ່າໜ້ອຍໜຶ່ງສຳລັບບໍລິການເລື່ອງຢາທຳມະຊາດ, ບີບນວດສັນຫຼັງແລະການນວດຮ່າງກາຍຕ່າງໆ. ຍ້ອນຄວາມຕ້ອງການບໍລິການນີ້ຫຼວງຫຼາຍ, ໄດ້ມີການເລືອກເອົາແມ່ຍິງທີ່ບໍ່ສາມາດເສັຽບ່ອນເອກະຊົນກ່ອນ.
- ◆ ການບໍລິການຢ່າງອື່ນແມ່ນບໍ່ມີການຄິດຄ່າ, ຫຼືວ່າຂໍການບໍລິຈາກເຫຼັກນ້ອຍ.
- ◆ ຈະບໍ່ມີການປະຕິເສດແມ່ຍິງຜູ້ໃດ ດ້ວຍເຫດຜົນວ່າພວກເຂົາບໍ່ສາມາດເສັຽຄ່າໄດ້.

# ສິດແລະຄວາມຮັບຜິດຊອບຕ່າງໆຂອງແມ່ຍິງທີ່ໃຊ້ບໍລິການພວກເຮົາ

ຖານແມ່ນແມ່ຍິງຜູ້ນຶ່ງໃຊ້ບໍລິການຕ່າງໆຂອງພວກເຮົາ ທ່ານຈະໄດ້ຮັບການຊ່ວຍເຫຼືອປ້ອງກັນຜົນປະໂຍດຂອງທ່ານ ແລະການຊ່ວຍເຫຼືອໃຫ້ຕັດສິນໃຈໄດ້ຢ່າງລະອຽດດີ ກ່ຽວກັບສຸຂະພາບແລະການຢູ່ດີຂອງທ່ານ.
ສິດບາງຢ່າງຂອງທ່ານແມ່ນໄດ້ຮັບການຮັບຮອງຈາກກົດໝາຍ, ຢ່າງອື່ນແມ່ນມີການຮັບຮູ້ໃນຊຸມຊົນຂອງພວກເຮົາຕາມທຳມະດາ.

*ທ່ານມີສິດທີ່ຈະ:*

- ◆ ໄດ້ຮັບການຕ້ອນຮັບຢ່າງມີມາລະຍາດແລະຄວາມນັບຖື ໄດ້ຮັບລາຍລະອຽດຢ່າງແຈ່ມແຈ້ງດີກ່ຽວກັບການຮັກສາ
- ◆ ສຸຂະພາບຂອງທ່ານ ໃຊ້ຄຳເວົ້າທີ່ເຂົ້າໃຈໄດ້ງ່າຍດີ.
- ◆ ໄດ້ຮັບການຮັກສາປ້ອງກັນເລື່ອງສ່ວນຕົວແລະເລື່ອງຄວາມລັບພາຍໃນສູນນັ້ນ.
- ◆ ຍອມຮັບຫຼືປະຕິເສດບໍລິການຕ່າງໆທີ່ພວກເຮົາສເນີໃຫ້.
- ◆ ໃຊ້ບ່ອນບໍລິການນາຍພາສາ
- ◆ ອ່ານສະບັບໜັງສືຂອງທ່ານເວລາໃດກໍ່ໄດ້ ແລະຕື່ມລາຍລະອຽດແລະຄວາມຄິດເຫັນໃສ່ໄດ້
- ◆ ໃຫ້ຄວາມຄິດເຫັນຫຼືຄຳແນະນຳກ່ຽວກັບບໍລິການເຮົາ
- ◆ ເຮັດການຕໍ່ວ່າກ່ຽວກັບບໍລິການນີ້ ແລະໄດ້ຮັບແກ້ໄຂໄວແລະຢ່າງຍຸຕິທຳ.

*ທ່ານມີຄວາມຮັບຜິດຊອບ:*

- ◆ ທີ່ຈະຕ້ອງໃຫ້ລາຍລະອຽດທີ່ກົງກັນ ອັນທີ່ຈະຊ່ວຍໃນການຮັກສາສຸຂະພາບຂອງທ່ານ
- ◆ ທີ່ຈະຕ້ອງໄປຕາມນັດໝາຍ ຫຼືວ່າຕິດຕໍ່ຫາທາງບໍລິການຖ້າວ່າບໍ່ສາມາດໄປໄດ້
- ◆ ທີ່ຈະຕ້ອງແຈ້ງພະນັກງານສຸຂພາບໃຫ້ຮູ້ ຖ້າວ່າທ່ານກຳລັງໄປຫາຜູ້ອື່ນກ່ຽວກັບບັນຫາອັນດຽວກັນ.
- ◆ ທີ່ຈະຕ້ອງຍອມຮັບຜົນຂອງການຕັດສິນໃຈຂອງທ່ານ
- ◆ ກ່ຽວກັບການຮັກສາສຸຂະພາບຂອງທ່ານ
  ຮັບຮູ້ແລະນັບຖືສິດຕ່າງໆຂອງຄົນອື່ນໃນສູນນັ້ນ
- ◆ ແຈ້ງທາງສູນນັ້ນຖ້າວ່າທ່ານມີຄວາມບໍ່ພໍໃຈກ່ຽວກັບທາງບໍລິການນັ້ນ **ແລະ**ກະລຸນາບອກໃຫ້ພວກເຮົາຮູ້ ຖ້າວ່າທ່ານພໍໃຈກັບການບໍລິການຂອງພວກເຮົາ.

**ພວກເຮົາມີສິດກຳນົດການບໍລິການທີ່ມີຮັບໃຊ້ນັ້ນ ຕາມພື້ນຖານຂອງການຕັດສິນໃຈຂອງນັກອາຊີບ, ບໍລິການມີຮັບໃຊ້ຫຼືບໍ່ ຫຼືວ່າດ້ວຍຄວາມປອດໄພຂອງພະນັກງານແລະຜູ້ມາໃຊ້ບໍລິການນີ້.**